# ຄວາມຍິ່ງໃຫຍ່ໃນຄວາມເຊື່ອ ຂອງ: ໂຢຊວຍ ແລະ ກາເລັບ






Lesson 8 for November 22, 2025







"ຈົ່ງລະນຶກເຖິງພວກ
ຜູ້ນຳຂອງເຈົ້າ ຄືຜູ້ທີ່
ໄດ້ປະການພຣະທຳ
ແກ່ພວກເຈົ້າ. ຈົ່ງ
ພິຈາລະນາເບິ່ງຜົນ
ສຸດທ້າຍແຫ່ງຊີວິດ
ຂອງພວກເພິ່ນ ແລະ
ຈົ່ງປະຕິບັດຕາມ
ແບບຢ່າງຄວາມເຊື່ອ
ຂອງພວກເພິ່ນ"

(ຮລ 13:7)

ພວກເຮົາຮູ້ຈັກ 10 ຄົນນີ້ບໍ່?: ຊາມມູອາ, ຊາຟັດ, ອີການ, ປານຕີ, ກາດດີເອນ, ກາດດີ, ອາມມີເອນ, ເສທູເຣ, ນາບີ ແລະ ເກອູເອນ?
"ຊື່ສຽງ" ຂອງພວກເຂົາ ເກີດຈາກການບໍ່ໄວ້ວາງໃຈໃນພຣະເຈົ້າ, ເຊິ່ງນຳໄປສູ່ຄວາມຕາຍຂອງພວກເຂົາ ແລະ ຄວາມຕາຍຂອງຄົນອີກໜຶ່ງລຸ້ນ. (ຈຊບຊ. 14:36-37).
ແຕ່ວ່າພວກເຈົ້າໄດ້ຍິນຊື່ຂອງຄົນພວກນີ້ເລື້ອຍໆ: ໂຢຊວຍ ແລະ ກາເລັບ. ພວກເຂົາຢືນຢັດໝັ້ນຄົງ, ເຊື່ອໃນຄຳສັນຍາຂອງພຣະເຈົ້າ, ແລະ ມີຊີວິດຢູ່ຈົນເຫັນພຣະສັນຍາຂອງພຣະເຈົ້າໄດ້ກາຍເປັນຈິງ (ຈຊບຊ. 14:38).

ພວກເຮົາຈະຮຽນຮູ້ຈາກຄວາມເຊື່ອຂອງພວກເຂົາ ແລະ ມີຄວາມໄວ້ວາງໃຈຢ່າງເຕັມທີ່ວ່າ ພຣະເຈົ້າຊົງເຮັດໃຫ້ສິ່ງທີ່ເປັນໄປບໍ່ໄດ້ ໃຫ້ເປັນໄປໄດ້ ແບບດຽວກັນກັບທີ່ພວກເຂົາເຮັດໄດ້ແນວໃດ?





ຄວາມເຊື່ອຂອງກາເລັບ:

- ເຮັດໃຫ້ສິ່ງທີ່ເປັນໄປບໍ່ໄດ້ມາເປັນໄປໄດ້.
- ຄວາມເຊື່ອຜ່ານການກະທຳ.
- ສິ່ງຕໍ່ໂຄກເພີງ.

ຄວາມເຊື່ອຂອງໂຢຊວຍ.

ວິທີທີ່ຈະບັນລຸຄວາມເຊື່ອ.



# ຄວາມເຊື່ອຂອງກາເລັບ

# ເຮັດໃຫ້ສິ່ງທີ່ເປັນໄປບໍ່ໄດ້ ໃຫ້ເປັນໄປໄດ້

"ແຕ່ຄົນທີ່ໄປນຳຂ້າພຣະເຈົ້າໄດ້ເຮັດໃຫ້ປະຊາຊົນຢ້ານກົວ. ສ່ວນຂ້າພຣະເຈົ້າເອງໄດ້ເຊື່ອຟັງຢ່າງສັດຊື່ຕໍ່ພຣະເຈົ້າຢາເວ ພຣະເຈົ້າຂອງຂ້າພຣະເຈົ້າ" (ຢຊ 14:8)

ຊື່ "ກາເລັບ" ມີຄວາມໝາຍວ່າ "ໂຕໝາ" ສາມາດເຫັນໄດ້ຈາກຊີວິດຂອງລາວ, ລາວບໍ່ໄດ້ຮັບເອົາຊື່ນີ້ໃນຖານະເປັນຄຳຢຽບຢາມ , ແຕ່ຍ້ອນຄວາມຈົງຮັກພັກດີ ອັນແນ່ວແນ່ຂອງລາວ. ລາວຊື່ສັດໃນເວລາທີ່ຄົນອື່ນບໍ່ຊື່ສັດ ແລະ ບໍ່ຫວັ່ນໄຫວໃນເວລາທີ່ຄົນອື່ນຫວັ່ນໄຫວ.

ໃນຂະນະທີ່ຜູ້ສອດແນມທັງ 10 ຄົນເບິ່ງວ່າ ເມືອງຕ່າງໆນັ້ນຍາກທີ່ຈະເຂົ້າຍຶດຄອງໄດ້, ແລະ ກໍ່ເປັນເລື່ອງຍາກທີ່ຈະເອົາຊະນະຄົນທຸ່ນໃຫຍ່ໄດ້, ກາເລັບ ໄດ້ເບິ່ງເມືອງຕ່າງໆສາມາດເອົາຊະນະໄດ້ ແລະ ເບິ່ງຄົນທຸ່ນໃຫຍ່ຄືກັນກັບ "ເຂົ້າຈີ່ທີ່ຖືກກິນ" (ຈຊບຊ. 13:28-33; 14:6-9).

ລາວໄດ້ຍຶດໝັ້ນຄວາມຄິດເຫັນຂອງຕົນເອງພ້ອມກັບໂຢຊວຍ (ເຊິ່ງອາຍຸໜ້ອຍກວ່າລາວເລັກນ້ອຍ), ເຖິງວ່າຜູ້ຄົນຢາກຈະແກວ່ງກ້ອນຫີນໃສ່ພວກເຂົາກໍ່ຕາ
(ຈຊບຊ. 14:10).

ສິ່ງນີ້ເປັນສິ່ງໜຶ່ງທີ່ພວກເຮົາສາມາຮຽນແບບຂອງພວກເຂົາໄດ້ ຄືການຮັກສາຄວາມເຊື່ອ ແລະ ໝັ້ນຄົງໃນພຣະເຈົ້າ ຜູ້ທີ່ຊົງເຮັດໃຫ້ສິ່ງທີ່ເປັນໄປບໍ່ໄດ້ ກາຍມາເປັນໄປໄດ້.



# ຄວາມເຊື່ອຜ່ານການກະທຳ

“ບັດນີ້ຂໍທ່ານຈົ່ງມອບດິນແດນທາງເຂດເນີນພູໃຫ້ຂ້າພະເຈົ້າສາ ເພາະພະເຈົ້າຢາເວໄດ້ສັນຍາໄວ້ກັບຂ້າພະເຈົ້າ ໃນມື້ທີ່ຂ້າພະເຈົ້າ ແລະ ຄົນຂອງຂ້າພະເຈົ້າໄດ້ລາຍງານ. ໃນສະໄໝນັ້ນ ພວກຂ້າພະເຈົ້າບອກທ່ານແລ້ວວ່າ ມີເຊື້ອຊາດຂອງຄົນຮ່າງໃຫຍ່ຊື່ວ່າ: ອານາກີມ ໄດ້ຢູ່ໃນເມືອງທີ່ມີປ້ອມປ້ອງກັນ. ຖ້າວ່າພຣະເຈົ້າຢາເວສະຖິດຢູ່ນຳຂ້າພະເຈົ້າແທ້ ຂ້າພະເຈົ້າຈະຂັບໄລ່ພວກເຂົາອອກໄປ ຕາມທີ່ພະເຈົ້າຢາເວໄດ້ບອກໄວ້ນັ້ນ

(ຢຊ 14:12 )



ກາເລັບເອງໄດ້ເວົ້າວ່າ, ຕອນທີ່ໂມເຊໄດ້ຖາມເຖິງເລື່ອງຕ່າງໆ, “ຂ້າພະເຈົ້າໄດ້ລາຍງານໃຫ້ລາວຕາມຄວາມເຊື່ອຂອງຂ້າພະເຈົ້າ” (ຢຊ. 14:7), ແລະ “ຂ້າພະເຈົ້າໄດ້ຕິດຕາມພຣະເຈົ້າຢາເວຂອງຂ້າພະເຈົ້າຢ່າງສຸດໃຈ” (ຢຊ. 14:8). ຍ້ອນຄວາມຊື່ສັດຂອງລາວ, ພຣະເຈົ້າຈຶ່ງສັນຍາວ່າ ລາວຈະໄດ້ຮັບມໍລະດົກໃນບ່ອນທີ່ຕີນຂອງລາວໄດ້ໄປຢຽບ ລະຫວ່າງການກວດສອບ (ຢຊ. 14:9).






ກາເລັບໄດ້ອາຍຸ 40 ປີ, ຕອນທີ່ລາວໄດ້ຖືກສົ່ງໄປເປັນຜູ້ສອດແນມ. ຫລັງຈາກ 40 ປີທີ່ໄດ້ຮັບໄຊຊະນະໃນແຜ່ນດິນຄານາອານແລ້ວ ລາວໄດ້ອາຍຸ 85 ປີ, (ຢຊ. 14:10). ຮ່າງກາຍ ແລະ ຄວາມຄິດຂອງລາວຍັງຄົນແຂງແຮງ, ຄວາມຄິດຂອງລາວຍັງຄົງຄືເກົ່າ (ຢຊ 14:11).

ເມື່ອເຖິງເວລາທີ່ພຣະເຈົ້າໄດ້ເຮັດຕາມສັນຍາຂອງພຣະອົງ ແລະກໍ່ໄດ້ເຫັນວ່າ ຄຳເວົ້າ ແລະ ຄຳສັນຍາຂອງພຣະອົງນັ້ນບໍ່ສູນເປົ່າ, ພຣະອົງຊົງຮັກສາສັນຍາສະເໝີ. ຍ້ອນຄວາມຊ່ວຍເຫລືອຂອງພຣະເຈົ້າ ລາວຈຶ່ງໄດ້ເອົາຊະນະຄົນຫຸ່ນໃຫຍ່ ແລະ ຍຶດຄອງເມືອງຂອງພວກເຂົາໄດ້ (ຢຊ. 14:12-14).

# ສິ່ງຕໍ່ໂຄກເພີງ



**“ກາເລັບໄດ້ກ່າວວ່າ: ຜູ້ໃດຍຶດຄອງເມືອງກີຣິອາດເຊເຟນີ້ໄດ້ສໍາເລັດ ຈະໄດ້ແຕ່ງງານກັບອັກຊາ ລູກສາວຂອງຂ້າພະເຈົ້າ’ ” (ຢຊ 15:16)**

ເມື່ອກາເລັບໄດ້ຍຶດຄອງດິນແດນທີ່ລາວມີສິດຄອບຄອງໄດ້ແລ້ວ, ລາວກໍ່ໄດ້ຄິດເຖິງມໍລະດົກທີ່ລາວຈະປະຖິ້ມໄວ້ເບື້ອງຫລັງ. ແລະ ຄິດວ່າ ລູກຫລານຂອງລາວຈະຍັງຄົງໄວ້ວາງໃຈໃນພຣະເຈົ້າແບບດຽວກັບລາວບໍ?

ລາວໄດ້ພິສູດແລ້ວວ່າ ພຣະເຈົ້າເປັນຜູ້ທີ່ສາມາດໄວ້ວາງໃຈໄດ້, ແລະ ດຽວນີ້ ລາວກໍາລັງຊອກຫາຜູ້ທີ່ມີຄວາມເຊື່ອແບບດຽວກັນກັບລາວ, ເພື່ອທີ່ລາວຈະໄດ້ສົ່ງຕໍ່ *ໂຄກເພີງນັ້ນໃຫ້*



ດ້ວຍເຫດຜົນນີ້, ລາວຈຶ່ງໄດ້ສັນຍາວ່າຈະຍົກລູກສາວຂອງລາວໃຫ້ກັບຜູ້ທີ່ສາມາດເອົາຊະນະເມືອງ ກີຣິອາດເຊເຟ ໄດ້. ເມືອງນີ້ມີຊື່ອີກຢ່າງໜຶ່ງຄື ເດບີ (ຢຊ. 15:15-16).

ຫລານຊາຍຂອງລາວ ທ.ໂອດນີເອນ Othniel ເປັນຜູ້ເຂົ້າຍຶດຄອງເມືອງນັ້ນໄດ້, ແລະໄດ້ກາຍມາເປັນຜູ້ພິພາກສາຄົນທໍາອິດຂອງອິດສະຣາເອນ (ຢຊ. 15:17; ພຜປຄ 3:9-11).



ຫລັງຈາກໄດ້ແຕ່ງງານກັບນາງ ອັກສາ, ລູກສາວຂອງກາເລັບ, ນາງໄດ້ໂນ້ມນ້າວພໍ່ຂອງນາງໃຫ້ອະນຸຍາດໃຫ້ພວກເຂົາຂະຫຍາຍອານາຈັກເຂດແດນທີ່ຍຶດຄອງນັ້ນ (ຢຊ. 15:18-19), ເຊິ່ງສະແດງໃຫ້ເຫັນວ່າ ໂອດນີເອນ ເປັນຜູ້ສືບທອດທີ່ຄູ່ຄວນໃຫ້ແກ່ກາເລັບ.



# ຄວາມເຊື່ອຂອງໂຢຊວຍ

"ເມື່ອປະຊາຊົນອິດສະຣາເອນໄດ້ແບ່ງປັນດິນແດນຮຽບຮ້ອຍແລ້ວ ພວກເຂົາໄດ້ຍົກເອົາສ່ວນຂອງດິນແດນຕອນໜຶ່ງ ມອບໃຫ້ໂຢຊວຍລູກຊາຍຂອງນູນ ເພື່ອໃຫ້ເພິ່ນເປັນກຳມະສິດ" (ຢຊ 19:49)



ໃນຕອນທີ່ເປັນໜຸ່ມ, ໂຢຊວຍໄດ້ຖືກເລືອກໂດຍໂມເຊ ໃນຖານະເປັນຜູ້ຊ່ວຍ. ລາວໄດ້ພິສູດໃຫ້ເຫັນວ່າລາວນັ້ນເປັນຄົນທີ່ເຊື່ອຟັງ, ກ້າຫານ, ຊື່ສັດ, ຊ່ວຍເຫລືອ, ແລະ ຮັກໃນສິ່ງຕ່າງໆທີ່ເປັນຂອງພຣະເຈົ້າ (ອພຍ. 33:11).
ເມື່ອຮອດເວລາທີ່ລາວຈະໄດ້ດິນແດນເປັນຂອງຕົນເອງ, ລາວໄດ້ລໍຖ້າຈົນກວ່າທຸກໆເຜົ່າຈະໄດ້ຮັບມໍລະດົກຂອງພວກເຂົາໝົດກ່ອນ, ແລະ ລາວຈຶ່ງໄດ້ເລືອກເອົາ" ດິນແດນສ່ວນທີ່ເຫລືອຢູ່ [ຕິມນາດເຊຣາ] (ຢຊ. 19:50), ເມືອງທີ່ໃກ້ກັບເມືອງຊີໂລ, ເຊິ່ງເປັນບ່ອນທີ່ຕັ້ງຂອງສະຖານນະມັດສະການ



ຈາກເຫດການນີ້ ພວກເຮົາສາມາດຮຽນຮູ້ວ່າ:

ຄວາມເຊື່ອຂອງລາວບໍ່ໄດ້ຖືກເພີກເສີຍ; ແຕ່ໄດ້ເປີດມຸມມອງຂອງຄວາມເຂົ້າໃຈທີ່ແຕກຕ່າງ

ແທນທີ່ທີ່ຈະຈົ່ມວ່າ, ແຕ່ພວກເຮົາຖືກຮຽກເອີ້ນໃຫ້ໄວ້ວາງໃຈ ແລະ ຍອມຈຳນົນຕໍ່ແຜນການຂອງພຣະເຈົ້າ

ພຣະພອນຈະມາເຖິງຜູ້ທີ່ຍັງຄົງຍຶດໝັ້ນໃນພຣະເຈົ້າຢ່າງສຸດຫົວໃຈ

ຊີວິດໃນທຸກໆດ້ານຂອງພວກເຮົາຄວນດຳເນີນໄປຕາມແຜນການຂອງພຣະເຈົ້າ

ການຢູ່ໃກ້ຊິດກັບພຣະເຈົ້ານັ້ນຄຸ້ມຄ່າ (ພສສ. 84:10)

# ວິທີທີ່ຈະບັນລຸ ຄວາມເຊື່ອ



“ດ້ວຍເຫດນັ້ນເມື່ອເຮົາທັງຫລາຍມີຝູງພະຍານຫລວງຫລາຍຢູ່ຮອບຂ້າງຢ່າງນີ້ແລ້ວ ພວກເຮົາຈົ່ງຊັດຖິ້ມທຸກຢ່າງທີ່ຖ່ວງຢູ່ ແລະ ຜິດບາບທີ່ຕິດແໜ້ນໂດຍງ່າຍ, ສ່ວນການແລ່ນແຂ່ງທີ່ກຳນົດໄວ້ຕໍ່ໜ້າພວກເຮົານັ້ນ, ຈົ່ງພາກັນແລ່ນດ້ວຍຄວາມພຽນພະຍາຍາມ. ຈົ່ງປັກຕາເບິ່ງພຣະເຢຊູເຈົ້າ ຄືຜູ້ບຸກເບີກຄວາມເຊື່ອ ແລະ ຜູ້ຊົງເຮັດໃຫ້ຄວາມເຊື່ອຂອງພວກເຮົາເຖິງທີ່ສຳເລັດ. ພຣະອົງໄດ້ຖືວ່າຄວາມລະອາຍນັ້ນບໍ່ເປັນສິ່ງສຳຄັນ ຈຶ່ງໄດ້ປະທັບລົງເບື້ອງຂວາພຣະທີ່ນັ່ງຂອງພຣະເຈົ້າ (ຮລ 12:1-2 )

ພຶດຕິກຳຂອງພວກເຮົາມັກຈະສະແດງອອກຈາກສິ່ງທີ່ພວກເຮົາໄດ້ເຫັນ. ແມ້ແຕ່ສິ່ງທີ່ຖືກເອີ້ນວ່າ ” ເຊວປະສາດແບບກະຈົກເງົາ" ກໍ່ຍັງເຮັດໃຫ້ຄວາມແຕກຕ່າງລະຫວ່າງການສັງເກດ ກັບການກະທຳນັ້ນເລືອນລາງໄປ



ໃນພຣະຄຳພີໄດ້ແນະນຳໃຫ້ພວກເຮົາສັງເກດເບິ່ງແບບຢ່າງຂອງວິລະບຸຣຸດຜູ້ຍິ່ງໃຫຍ່ແຫ່ງຄວາມເຊື່ອ, ໂດຍໃຫ້ຄວາມສົນໃຈເປັນພິເສດໃຫ້ກັບພຣະເຢຊູ, ຜູ້ເປັນແບບຢ່າງອັນສູງສຸດ (ຮບ. 12:1-2).



ໂດຍການຮຽນຮູ້ຈາກຊີວິດຂອງກາເລັບ ແລະ ໂຢຊວຍ, ພວກເຮົາໄດ້ຮຽນຮູ້ວ່າພວກເຂົາໄດ້ໄວ້ວາງໃຈໃນພຣະເຈົ້າແບບໃດ; ຮູ້ຈັກຖ່ອມໃຈແບບພວກເຂົາເຮັດ; ກ້າຫານທີ່ຈະເປັນພະຍານເຖິງຄວາມຈິງ, ສິ່ງນີ້ແມ່ນເຮົາສາມາດຮຽນຈາກພວກເຂົາໄດ້.

ແລ້ວພວກເຮົາຈະປ່ຽນແປງໂຕເອງໄດ້ແນວໃດ? ພຣະຄຳພີບອກຢ່າງຊັດເຈນວ່າ: ຍອມໃຫ້ພຣະວິນຍານບໍຣິສຸດເຮັດວຽກໃນໂຕຂອງພວກເຮົາ
(2 ຄຣທ. 3:18). ນີ້ແມ່ນວຽກທີ່ກະຕືລືລົ້ນ. ທີ່ພວກເຮົາຈະຕ້ອງໄດ້ເລືອກເພື່ອໃຫ້ຊີວິດມີການປ່ຽນແປງ ຄືກັນກັບກາເລັບທີ່ໄດ້ລົງມືປະຕິບັດ. ເພາະພວກເຮົາຊົງຖືກຮຽກເອີ້ນໃຫ້ເປັນເຄື່ອງບູຊາທີ່ມີຊີວິດເພື່ອພຣະເຈົ້າ (ໂຣມ. 12:1-2).

